ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ເລກທີ 1818 /ຫສນຍ.ກສສ

ນະຄອນຫຼວງວຽງຈັນ, ວັນທີ 18 - 11 - 2016

## <u>ແຈ້ງການ</u>

**ຮຽນ**: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ ການເງິນ ທີ່ເຄົາລົບ.

- ທ່ານ ລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້.
- ທ່ານ ລັດຖະມົນຕີກະຊວງ ອຸດສາຫະກຳ ແລະ ການຄ້າ.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາ ທ່ານ ເຈົ້າແຂວງ ໃນທົ່ວປະເທດ.

**ເລື່ອງ**: ຂັ້ນຕອນການຢັ້ງຢືນຜະລິດຕະພັນໄມ້ (ຂັ້ນລິດ) ເພື່ອສົ່ງອອກໄປຕ່າງປະເທດ.

- ອີງຕາມ ເອກະສານລາຍງານຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ 1912/ອຄ, ລົງວັນທີ 18 ຕຸລາ 2016 ແລະ ເລກທີ 2024/ອຄ.ກຂອ, ລົງວັນທີ 07 ພະຈິກ 2016.
- ອີງຕາມ ການຕົກລົງ ແລະ ຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 08 ພະຈິກ 2016.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: " **ເຫັນດີຕາມການສະເໜີຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ຄື: 1/- ຄະນະກຳມະການຢັ້ງຢືນຜະລິດຕະພັນໄມ້ (ຂັ້ນລິດ) ເພື່ອສົ່ງອອກໄປຕ່າງປະເທດ ທີ່ເປັນຜະລິດຕະພັນໄມ້ຈາກປ່າທຳມະຊາດ ໃຫ້ປະກອບມີຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງກະສິກຳ ແລະ ປ່າໄມ້ ແລະ ຂະແໜງການເງິນ ພາກສ່ວນລະ 01 ທ່ານ; ສ່ວນການສົ່ງອອກຜະລິດຕະພັນໄມ້ຈາກສວນປູກ ໃຫ້ປະກອບມີຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງກະສິກຳ ແລະ ປ່າໄມ້ ພາກສ່ວນລະ 01 ທ່ານ ໂດຍໃຫ້ຖືເອົາໃບຢັ້ງຢືນຜະລິດຕະພັນໄມ້ຂັ້ນລິດຂອງຄະນະກຳມະການດັ່ງກ່າວເທົ່ານັ້ນ ເພື່ອເປັນເອກະສານຢັ້ງຢືນການສົ່ງອອກ ແລະ ກະຊວງ ອຸດສາຫະກຳ ແລະ ການຄ້າ ສົມທົບກັບກະຊວງ ກະສິກຳ ແລະ ປ່າໄມ້ ແລະ ກະຊວງ ການເງິນ ຮີບຮ້ອນອອກບົດແນະນຳໃຫ້ຂະແໜງການຂອງຕົນຢູ່ທ້ອງຖິ່ນ ຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.**

**2/- ໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ພິຈາລະນາການສົ່ງອອກຜະລິດຕະພັນຖ່ານຂາວ ທີ່ຜະລິດຈາກໄມ້ຕິ້ວ.**

3/- ສຳລັບການປະມູນຂາຍໄມ້, ນອກຈາກແຂວງອັດຕະປື ແລະ ແຂວງຊຽງຂວາງ ທີ່ລັດຖະບານ ໄດ້ແຈ້ງໃຫ້ເລີ່ມປະມູນ ຕາມແຈ້ງການ ເລກທີ 1345/ຫສນຍ ແລ້ວນັ້ນ, ຫາກແຂວງໃດ ສຳເລັດການກວດກາ, ວັດແທກ, ຂຶ້ນບັນຊີໄມ້ ແລະ ມີຄວາມພ້ອມ ທີ່ຈະປະມູນຂາຍໄມ້ແລ້ວ ແມ່ນໃຫ້ຈັດຕັ້ງປະຕິບັດການປະມູນຂາຍໄດ້ເລີຍ ຕາມລະບຽບການປະມູນ ທີ່ກະຊວງ ອຸດສາຫະກຳ ແລະ ການຄ້າ ວາງອອກ.

4/- ໃຫ້ທຸກພາກສ່ວນກວດກາ ແລະ ທົບທວນຄືນ ອອກແຈ້ງການລົບລ້າງບັນດານິຕິກຳ ທີ່ພາກສ່ວນຂອງຕົນໄດ້ອອກຜ່ານມາ ກ່ຽວກັບຂັ້ນຕອນການສົ່ງອອກຜະລິດຕະພັນໄມ້ ແລະ ການປະມູນຂາຍໄມ້ ທີ່ເຫັນວ່າຂັດກັບຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ແລະ ແຈ້ງການສະບັບນີ້ ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມການຊີ້ນຳຂອງຂັ້ນເທິງດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ພ. ແພງພູມ

ເພັດ ພົມພິພັກ

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ນາຍົກ-ບັນດາຮອງນາຍົກ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ສະພາແຫ່ງຊາດ | 01 ສະບັບ |
| - ອົງການກວດກາລັດຖະບານ | 01 ສະບັບ |
| - ຄະນະ ຫສນຍ ທ່ານລະ | 01 ສະບັບ |
| - ກົມສັງລວມເສດຖະກິດ, ຫສນຍ | 01 ສະບັບ |
| - ເກັບມ້ຽນ | 01 ສະບັບ |